











**ບ່ອນຕິດຕໍ່ພົວພັນ :**

ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນ ຫຼວງວຽງຈັນ.
ຖະໜົນກຳແພງເມືອງ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

ໂທລະສັບ: +856-21 416736.415877.
+856-20 5507150, 5604917, 5719494
2443337, 5444406.

ໂທລະສານ: +856-21 413213.

E-mail:Handicraftcenter.DOIC@Hotmail.com
:Handicraftcenter.DOIC@Yahoo.com

**ລາຍລະອຽດເພີ້ມເຕີມ:**

Website: http://www.lao trade .org.la
http://www.SMEPDO.org.la
http://www.lao - itecc.la

**ພາກສ່ວນງານມະຫາກຳ ສີມືຫັດຖະກຳລາວ:**

ໂທລະສັບ: +856-21 452 956
ໂທລະສານ:+856-21 453 673
E-mail: lhalaos@laotel.com
Website: http://www.laohandicrafts.com









## ຂໍເຊີນເຂົ້າຮ່ວມ

### ງານບຸນນະມັດສະການພະທາດຫລວງ ແລະ ງານວາງສະແດງສິນຄ້າ ພາຍໃນ - ສາກົນ ປະຈໍາປີ 2009.

ຄະນະກໍາມະການຈັດງານ ມີຄວາມຍິນດີ ເຊື້ອເຊີນ : ການຈັດຕັ້ງ, ສະຖານທູດ, ອົງການຈັດຕັ້ງສາກົນ ປະຈໍາລາວ, ຫົວໜ່ວຍທຸລະກິດທັງພາກລັດ ແລະ ເອກະຊົນ ເຂົ້າຮ່ວມງານບຸນນະມັດສະການພະທາດຫລວງ ແລະງານວາງສະແດງສິນຄ້າພາຍໃນ - ສາກົນ ປະຈໍາປີ 2009.

ໃນງານບຸນນະມັດສະການພະທາດຫລວງ ແລະ ງານວາງສະແດງສິນຄ້າພາຍໃນ - ສາກົນ ປະຈໍາ ປີ 2009 ປະກອບມີ 03 ກິດຈະກໍາ ຄື :

1. ກິດຈະກໍາ ທາງດ້ານສາດສະໜາ ແລະ ຮີດຄອງປະເພນີ ຈັດຢູ່ເດີ່ນພະທາດຫລວງ.
2. ການວາງສະແດງ ແລະຂາຍສິນຄ້າ ໄດ້ກໍານົດເປັນ 02 ແຫ່ງ ຄື: ຢູ່ເດີ່ນສະໜາມຫລວງ ແລະ ຢູ່ສູນການຄ້າລາວ - ໄອເຕັກ .
3. ການສະແດງສິນລະປະວັນນະຄະດີ ຈັດຢູ່ເດີ່ນສະໜາມຫລວງ.



❖ ບັນດາຫົວໜ່ວຍທຸລະກິດ,ໂຮງຈັກ,ໂຮງງານຂະໜາດນ້ອຍ, ກາງ ແລະ ໃຫ່ຍ, ຊາວຄ້າຂາຍທີ່ມີຈຸດປະສົງເຂົ້າຮ່ວມງານບຸນນະມັດສະການພະທາດຫຼວງ ແລະ ງານວາງສະແດງສິນຄ້າພາຍໃນ - ສາກົນ ປະຈໍາປີ 2009. ໃຫ້ຍື່ນໃບສະເໜີ ຫຼືໃບຄໍາຮ້ອງເຊິ່ງຜ່ານການຢັ້ງຢືນຈາກກົມກອງ, ບໍລິສັດ, ໂຮງຈັກໂຮງງານຂອງຕົນ. ສໍາລັບບຸກຄົນ ແລະ ຫົວໜ່ວຍທຸລະກິດການຄ້າ ຍ່ອຍໃຫ້ມີໃບຄໍາຮ້ອງຢັ້ງຢືນຈາກບ້ານທີ່ຕົນຢູ່, ໂດຍແຈ້ງຈຸດປະສົງ ແລະ ລາຍການສິນຄ້າ, ຈໍານວນ, ມູນຄ່າສິນຄ້າສົ່ງໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫລວງວຽງຈັນ (ຂະແໜງສົ່ງເສີມການຜະລິດ ແລະ ການຄ້າ) ຕັ້ງຢູ່ຖະໜົນ ກໍາແພງເມືອງ ບ້ານ ໂພນທັນເໜືອ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ *ກ່ອນວັນທີ 10 ຕຸລາ 2009.*

❖ *ກໍານົດເວລາລົງທະບຽນບໍ່ໃຫ້ກາຍ ວັນທີ 15 ຕຸລາ 2009.*

❖ ເປົ້າໝາຍຂອງຜູ້ເຂົ້າຮ່ວມງານ.

1. ບັນດາຫົວໜ່ວຍທຸລະກິດ, ບໍລິສັດ, ໂຮງຈັກ, ໂຮງງານ,ໂຮງຊ່າງຫັດຖະກໍາ,
2. ຕົວແທນຈາກບັນດາກະຊວງ, ບັນດາແຂວງທົ່ວປະເທດ, ເມືອງ ແລະຂະແໜງການທີ່ກ່ຽວຂ້ອງ .
3. ອົງການຈັດຕັ້ງສາກົນປະຈໍາລາວ, ບັນດາສະຖານທູດຕ່າງໆປະຈໍາ ສປປລາວ.

❖ ປະເພດສິນຄ້າທີ່ຈະນໍາມາວາງສະແດງ ແລະ ຂາຍ.

***ສໍາລັບວາງສະແດງສະເພາະ***: ສາມາດນໍາເອົາຮູບພາບ,ສິນຄ້າຕົວຢ່າງ ຫລື ສະແດງກ່ຽວກັບການພົວພັນຮ່ວມມື ແລະເຕັກນິກວິທະຍາສາດໃໝ່ທີ່ກ້າວໜ້າຂອງ ປະເທດ, ແຂວງ, ເມືອງ ຂອງທ່ານດ້ວຍຮູບພາບ, ຂໍ້ມູນ, ຫລືສະຖິຕິກໍ່ໄດ້.

***ສໍາລັບວາງສະແດງ ແລະຂາຍສິນຄ້າ*** ອະນຸຍາດໃຫ້ສະເພາະຜະລິດຕະພັນເຊັ່ນ:

1. ຜະລິດຕະພັນກະສິກໍາ - ປູກຝັງ , ລ້ຽງສັດ , ຜະລິດຕະພັນປຸງແຕ່ງໄມ້.
2. ຜະລິດຕະພັນຫັດຖະກໍາ ແລະ ຜະລິດຕະພັນວັດທະນະທໍາ.
3. ຜະລິດຕະພັນອຸດສາຫະກໍາ ທີ່ຜະລິດໄດ້ພາຍໃນປະເທດ ແລະ ຕ່າງປະເທດ.

***ຂາຍສິນຄ້າສະເພາະ***: ອະນຸຍາດບັນດາບໍລິສັດ,ໂຮງງານທີ່ຜະລິດສິນຄ້າພາຍໃນ, ບໍລິສັດການຄ້າພາຍໃນ, ບໍລິສັດການຄ້າຂາອອກ-ຂາເຂົ້າ, ບໍລິສັດຕ່າງປະເທດ.

❖ ຂໍ້ຫ້າມ :

1. ຫ້າມນໍາເອົາຮູບພາບທີ່ຂັດກັບສາດສະໜາ ແລະ ຮີດຄອງປະເພນີເຂົ້າມາວາງສະແດງ.
2. ຫ້າມນໍາເອົາສິນຄ້າທີ່ຕິດພັນກັບສານເຄມີ ແລະ ອາວຸດສົງຄາມເຂົ້າຮ່ວມງານວາງສະແດງ ແລະຂາຍ. ລາຍລະອຽດສາມາດເບິ່ງໄດ້ໃນກົດລະບຽບຂໍ້ວ່າດ້ວຍການຄຸ້ມຄອງງານບຸນນະມັດສະການພະທາດຫລວງ ແລະ ງານວາງສະ ແດງສິນຄ້າພາຍໃນ - ສາກົນ ປະຈໍາປີ 2009.

❖ ຂະໜາດ ແລະ ລາຄາຄ່າເຊົ່າສະຖານທີ່.

| ລາຍການ | ສະຖານທີ່ | |
|---|---|---|
| | ເດີ່ນສະໜາມຫລວງ | ສູນການຄ້າລາວ ໄອເຕັກ |
| ຂະໜາດຂອງຫ້ອງ | 4 x 4 ຕາແມັດ | 3 x 3 ຕາແມັດ |
| ລາຄາ/ຫ້ອງ ( ກີບ) | 1,500,000 - 3,000,000 | 1,470,000 - 4,900,000 |
| ຈໍານວນຫ້ອງທັງໝົດ | 400 | 752 |

<u>ຮ້ານວາງສະແດງ ແລະຂາຍສິນຄ້າຢູ່ເດີ່ນສະໜາມຫລວງ</u>: ລາຄາເຊົ່າແມ່ນບໍ່ລວມຄ່າບໍລິການອື່ນໆ ຕົວຢ່າງ: ໂຕະ, ຕັ່ງ, ສາຍໄຟ, ປັກສຽບ ແລະຄ່າກະແສໄຟຟ້າ.
<u>ຮ້ານວາງສະແດງ ແລະຂາຍສິນຄ້າຢູ່ສູນການຄ້າລາວ-ໄອເຕັກ</u>: ລາຄາເຊົ່າຈະປະກອບມີສິ່ງອໍານວຍຄວາມສະດວກ ເຊັ່ນ: ດອກໄຟ 02 ດອກ, ປັກສຽບໄຟ 01 ຄູ່, ໂຕະ 01 ໜ່ວຍ, ຕັ່ງ 02 ໜ່ວຍ, ປ້າຍຊື່ຮ້ານ, ຄ່າອະນາໄມ ແລະ ປ້ອງກັນຄວາມສະຫງົບ.

❖ ຕາຕະລາງການເຄື່ອນໄຫວກິດຈະກໍາຕ່າງໆໃນງານບຸນນະມັດສະການພະທາດຫລວງ ແລະງານວາງສະແດງສິນຄ້າພາຍໃນ - ສາກົນ ປະຈໍາປີ 2009.

| ວັນທີ ເດືອນ ປີ / ເວລາ | ລາຍການກິດຈະກໍາ | ສະຖານທີ່ |
|---|---|---|
| 28/10/2009<br>18:00 ໂມງ<br>19:30ໂມງ-23:00ໂມງ | <br>- ພິທີເປີດເປັນທາງການ<br>- ການສະແດງສິນລະປະດົນຕີ | <br>ເດີ່ນສະໜາມຫຼວງ<br>ເດີ່ນສະໜາມຫຼວງ |
| 29/10/2009<br>08:00ໂມງ-16:00ໂມງ<br>19:30ໂມງ-23:00ໂມງ | <br>- ສາທິດວິທີການຜະລິດເຄື່ອງຫັດຖະກໍາລາວ<br>- ການສະແດງສິນລະປະດົນຕີ | <br>ເດີ່ນສະໜາມຫຼວງ<br>ເດີ່ນສະໜາມຫຼວງ |
| 30/10/2009<br>08:00ໂມງ-11:30ໂມງ<br>19:30ໂມງ-23:00ໂມງ | <br>- ກອງປະຊຸມສໍາມະນາກ່ຽວກັບການອອກແບບຜະລິດຕະພັນຫັດຖະກໍາລາວ.<br>- ການສະແດງສິນລະປະດົນຕີ | <br>ໄອ -ເຕັກ<br>ເດີ່ນສະໜາມຫຼວງ |
| <u>31/10/2009</u><br>08:00 ໂມງ<br>08:00ໂມງ-16:00ໂມງ<br>16:00 ໂມງ<br>16:00 ໂມງ<br>20:00 ໂມງ<br>19:30ໂມງ-23:00ໂມງ | <br>-ຖະຫວາຍເຄື່ອງສັງເວີຍແດ່ພະເຫລັກຫຼັກເມືອງ.<br>- ສາທິດວິທີການຜະລິດເຄື່ອງຫັດຖະກໍາລາວ<br>- ສູດປະລິດຕະມຸງຄຸນ.<br>- ສູດປະລິດຕະມຸງຄຸນ.<br>- ພິທີວຽນທຽນແຫ່ປະສາດເຜິ້ງ ແລະຄົບງັນຕາມປະເພນີ.<br>- ການສະແດງສິນລະປະດົນຕີ | <br>ວັດສີເມືອງ<br>ໄອ - ເຕັກ<br>ວັດສີເມືອງ<br>ວັດທາດຫຼວງ<br>ວັດສີເມືອງ<br>ເດີ່ນສະໜາມຫຼວງ |
| 01/11/2009<br>08:00ໂມງ-16:00ໂມງ<br>13:00 ໂມງ<br>14:00 ໂມງ<br>19:30ໂມງ-23:00ໂມງ | <br>- ສາທິດວິທີການຜະລິດເຄື່ອງຫັດຖະກໍາລາວ<br>- ພິທີແຫ່ປະສາດເຜິ້ງຈາກວັດສີເມືອງແລະເມືອງຕ່າງໆເພື່ອເຄື່ອນຂະບວນລໍຖ້າຢູ່ຫໍປະຊາຄານ ອິນດູຈີນ.<br>- ເຄື່ອນຂະບວນແຫ່ປະສາດເຜິ້ງເລີ້ມຈາກຫໍປະຊາຄານ ອິນດູຈີນເຂົ້າສູ່ເດີ່ນພະທາດຫຼວງ.<br>- ການສະແດງສິນລະປະດົນຕີ | <br>ເດີ່ນສະໜາມຫຼວງ |
| 02/11/2009<br>7:00 ໂມງ<br>13:00 ໂມງ<br>20:00 ໂມງ<br>19:30ໂມງ-23:00ໂມງ | <br>- ມີພິທີຕັກບາດ, ໂຫ້ອພະຮັບສິນ, ຟັງທໍາມະເທດສະໜາ, ຖະຫວາຍທານ ແລະ ຢາດນໍ້າ.<br>- ຫຼິ້ນກິລາພື້ນບ້ານ ( ຕີຄີ ).<br>- ພິທີວຽນທຽນ ຈູດທູບທຽນບູຊາພະທາດຫຼວງ.<br>- ການສະແດງສິນລະປະດົນຕີ. | <br>ເດີ່ນພະທາດຫຼວງ |

**ໝາຍເຫດ** :
ການວາງສະແດງ ແລະ ຂາຍສິນຄ້າ ຢູ່ເດີ່ນສະໜາມຫລວງ ແລະ ສູນການຄ້າລາວ - ໄອເຕັກ ຈະເລີ່ມແຕ່ເວລາ10:00 ໂມງ - 23 :00 ໂມງ ຂອງແຕ່ລະວັນ.